

# ໂຄງການ Pandemic EBT

ປີໂຮງຮຽນ 2020-21

## ຄຳຖາມທີ່ມັກຖືກຖາມກັນຢູ່ເລື້ອຍໆ

### ລາຍລະອຽດທົ່ວໄປ

**1. ໂຄງການ Pandemic EBT ແມ່ນຫຍັງ?**

ໂຄງການ Pandemic EBT ຫລື P-EBT
ເອົາສະວັດດີການໃຫ້ນັກຮຽນຜູ້ທີ່ມີເງື່ອນໄຂໄດ້ຮັບເພື່ອຈະໃຊ້ແທນຄ່າຂອງຄາບອາຫານທີ່ນັກຮຽນຈະໄດ້ຮັບຖ້າຫາກວ່າບໍ່ແມ່ນຍ້ອນການຂາດເຂີນການສອນໂດຍບຸກຄົນຫລືຍ້ອນການປິດໂຮງຮຽນໃນລະຫວ່າງປີໂຮງຮຽນ 2020-21. ກະຣຸນາເບິ່ງຄຳຖາມ 6 – 11 ສຳລັບລາຍລະອຽດຂອງເງື່ອນໄຂຮັບເອົາຂອງ P-EBT.

**2. ອັນນີ້ແຕກຕ່າງແນວໃດຈາກປີໂຮງຮຽນປີກາຍນີ້ແນວໃດ?**

ໂຄງການ P-EBT ຂອງປີໂຮງຮຽນ 2019-20
ໃນເບື້ອງຕົ້ນແລ້ວໄດ້ເອົາສະວັດດີການອາຫານໃຫ້ແກ່ນັກຮຽນຜູ້ທີ່ມີອາຍຸເຂົ້າໂຮງຮຽນທີ່ມີເງື່ອນໄຂໄດ້ຮັບສຳລັບເດືອນມາກຊ໌,ເອໂປຣ,ເມແລະຈູນ 2020.
ຄອບຄົວໄດ້ຮ້ອງຂໍເອົາສະວັດດີການເຫລົ່ານີ້ແລະຖ້າຫາກວ່າຖືກພົບວ່າມີເງື່ອນໄຂໄດ້ຮັບ,ເຂົາເຈົ້າຈະໄດ້ຮັບຈຳນວນຂອງການຊ່ວຍເຫລືອມາດຕະຖານທີ່ຖືກເບີກອອກໃຫ້ເປັນກ້ອນນຶ່ງໃສ່ບັດ Quest EBT.

ຣັດວໍຊິງຕັນໄດ້ຮັບການອະນຸມັດຈາກຣັດຖະບານກາງທີ່ຈະເບີກການຊ່ວຍເຫລືອ P-EBT
ອອກໃຫ້ເດັກນ້ອຍຍ້ອນການປິດໂຮງຮຽນສຳລັບປີໂຮງຮຽນ 2020-21, ຕັ້ງແຕ່ເດືອນເຊັບເທັມເບີ 2020 ໄປຫາເດືອນຈູນ 2021.
ພວກເຮົາໄດ້ດຳເນີນການໃນເງື່ອນໄຂຮັບເອົາໂດຍອັດຕະໂນມັດເພື່ອຈະເອົາການຊ່ວຍເຫລືອໃຫ້ຄອບຄົວເພີ້ມເຕີມອີກຊຶ່ງເຂົາເຈົ້າຕ້ອງການໃນລະຫວ່າງເຫດການສຸກເສີນສຸຂະພາບໂຣກ COVID-19. ອັນນີ້ຫມາຍຄວາມວ່າຄອບຄົວບໍ່ຕ້ອງໄດ້ຮ້ອງຂໍເອົາໂຄງການ 2020-21 P-EBT.

**3. ລູກຂອງຂ້ອຍຢູ່ບ່ອນຝາກເດັກນ້ອຍ.ເຂົາເຈົ້າຈະໄດ້ຮັບ ການຊ່ວຍເຫລືອບໍ່?**

ເພື່ອຈະເອົາການຊ່ວຍເຫລືອ P-EBT ໃຫ້ແກ່ເດັກນ້ອຍຢູ່ບ່ອນຝາກເດັກນ້ອຍຈາກເດືອນອົກໂຕເບີ 2020 ໄປຫາເດືອນເຊັບເທັມເບີ 2021, ຣັດຕ້ອງອອກແບບແຜນແລະຍື່ນແຜນການ P-EBT ຕ່າງຫາກເພື່ອການອະນຸມັດຈາກຣັດຖະບານກາງ.ກົມສັງຄົມສົງເຄາະແລະສາທາຣະນະສຸກກຳລັງອອກແບບແຜນໃນປັດຈຸບັນນີ້

ຄອບຄົວສາມາດເຂົ້າເບິ່ງ www.dshs.wa.gov/PEBT ເປັນຣະຍະໄປເພື່ອລາຍລະອຽດຄືບຫນ້າ.

**4. ຖ້າຫາກວ່າຂ້ອຍໄດ້ຮັບການຊ່ວຍເຫລືອ P-EBT, ມັນ ຈະສະ ທ້ອນເຖິງສະພາບ ການເຂົ້າເມືອງ ຂອງຂ້ອຍຫລືເຣັດ ໃຫ້ຂ້ອຍກາຍ ເປັນພາລະຂອງສາທາຣະນະຊົນບໍ່?**

ບໍ່ແມ່ນ.ກົດຣະບຽບການເປັນພາລະຂອງສາທາຣະນະຊົນບໍ່ຖືກ ໃຊ້ໃສ່ ການຊ່ວຍເຫລືອ P-EBT ແລະການຊ່ວຍເຫລືອ P-EBT ຈະບໍ່ສະ ທ້ອນເຖິງສະພາບການເຂົ້າເມືອງ.

**5. ລູກຂອງຂ້ອຍໄດ້ຄາບອາຫານທ່ຽງຢູ່ໂຮງຮຽນຢູ່.ຂ້ອຍຍັງມີ ສິດໄດ້ຮັບ P-EBT ບໍ່?**

ແມ່ນ. ການຊ່ວຍເຫລືອ P-EBT ແມ່ນການຊ່ວຍເຫລືອອາຫານ ເພີ້ມເຕີມ.ເດັກນ້ອຍຈະດຳເນີນທີ່ຈະໄດ້ຮັບຄາບອາຫານຈັບເອົາ ແລະໄປຢູ່ຕາມໂຮງຮຽນຫລສະຖານທີ່ຊຸມນຸມຊົນ,ຫລືອາຫານ ສຸກເສີນຢູ່ຕາມສະຖານທີ່ລ້ຽງເກືອສຸກເສີນ COVID-19 ທີ່ຖືກ ສະເນີໃຫ້ຢູ່ຕາມສະຖານທີ່ໃນຊຸມນຸມຊົນ,ເຖິງແມ່ນວ່າເຂົາເຈົ້າ ກຳລັງໄດ້ຮັບການຊ່ວຍເຫລືອ P-EBT ຢູ່ກໍຕາມ.

*ສະຖາບັນແຫ່ງນີ້ເປັນບ່ອນບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.*

Washington State Department of Social & Health Services
Transforming lives

## ເງື່ອນໄຂຮັບເອົາ P-EBT

### 6. ແມ່ນໃຜແດ່ມີເງື່ອນໄຂໄດ້ຮັບ P-EBT?

ເດັກນ້ອຍຜູ້ທີ່ຕາມປົກກະຕິແລ້ວມີການເຂົ້າເຖິງໂຄງການອາຫານທ່ຽງຢູ່ໂຮງຮຽນແຫ່ງຊາດ,ຫລື NSLP, ແລະໂຄງການອາຫານເຊົ້າຢູ່ໂຮງຮຽນ,ຫລື SBP, ແລະໄດ້ຖືກລົງທະບຽນ/ຈົດຊື່ຢູ່ຕາມໂຮງຮຽນຢູ່ໃນຣັດວໍຊິງຕັນທີ່:

- ໄດ້ຖືກປິດຫລືໄດ້ລຸດການເຂົ້າໂຮງຮຽນລົງເປັນເວລາຫ້າວັນຫລືຫລາຍກວ່າຕິດຕໍ່ກັນເນື່ອງມາຈາກຜົນຂອງເຫດການສຸກເສີນສຸຂະພາບຂອງສາທາຣະນະຊົນ COVID-19 ໃນຣະຫວ່າງປີໂຮງຮຽນ 2020-2021, ແລະ
- ຖືກພິຈາຣະນາເຫັນວ່າເດັກນ້ອຍມີເງື່ອນໄຂໄດ້ຮັບຄາບອາຫານໂຮງຮຽນຟຣີຫລືຣາຄາຜ່ອນ.

### 7. ຖ້າຫາກວ່າລູກຂອງຂ້ອຍໄປເຂົ້າໂຮງຮຽນ Community Eligibility ຫລື Provision 2 ທີ່ມີການເຂົ້າເຖິງຄາບເຂົ້າເຊົ້າ ແລະຄາບເຂົ້າທ່ຽງໂດຍບໍ່ຄິດຄ່າ,ເຂົາເຈົ້າມີເງື່ອນໄຂໄດ້ຮັບ P-EBT ບໍ່?

ເດັກນ້ອຍທຸກໆຄົນທີ່ເຂົ້າໂຮງຮຽນ Community Eligibility ຫລື Provision 2 ຈະມີເງື່ອນໄຂໄດ້ຮັບຖ້າຫາກວ່າໂຮງຮຽນທີ່ເດັກນ້ອຍຂອງທ່ານເຂົ້າຢູ່ມີການຮຽນຮູ້ໂດຍຕົນເອງທີ່ລຸດເວລາລົງຍ້ອນໂຣກ COVID-19.

### 8. ຂ້ອຍໄດ້ຮັບການຊ່ວຍເຫລືອອາຫານແລ້ວ.ຂ້ອຍຈະມີສິດໄດ້ຮັບ P-EBT ໂດຍອັດຕະໂນມັດໂລດບໍ່?

ເດັກນ້ອຍສ່ວນຫລາຍທີ່ມີການຊ່ວຍເຫລືອອາຫານເປີດຢູ່ຈະຖືກອະນຸມັດໂດຍອັດຕະໂນມັດໂລດສຳລັບຄາບອາຫານໂຮງຮຽນຟຣີ,ແຕ່ວ່າເຂົາເຈົ້າບໍ່ມີສິດໄດ້ຮັບການຊ່ວຍເຫລືອ P-EBT ໂດຍອັດຕະໂນມັດໂລດ.ເງື່ອນໄຂຮັບເອົາ P-EBT ຈະຂຶ້ນນຳໂຮງຮຽນທີ່ເດັກນ້ອຍໄປເຂົ້າແລະແບບວິທີການຮ່ຳຮຽນຂອງເຂົາເຈົ້າ.ຈົ່ງເບິ່ງຄຳຖາມ 22 ເພື່ອລາຍຣະອຽດເພີ້ມເຕີມ.

### 9. ຄອບຄົວຂອງຂ້ອຍໄດ້ຮັບການຊ່ວຍເຫລືອອາຫານຈຳນວນ $0. ຂ້ອຍຈະມີສິດໄດ້ຮັບ P-EBT ໂດຍອັດຕະໂນມັດໂລດບໍ່?

ບາງຄອບຄົວໄດ້ຮັບຈຳນວນການຊ່ວຍເຫລືອອາຫານ $0 ແລະຮັກສາສຳນວນເອກສານຂອງເຂົາເຈົ້າໃຫ້ເປີດຢູ່ສຳລັບການເຂົ້າຫາແຫລ່ງຊ່ວຍເຫລືອແນວອື່ນ.ຄອບຄົວທີ່ໄດ້ຮັບການຊ່ວຍເຫລືອອາຫານ $0 ຈະບໍ່ຖືກອະນຸມັດຄາບອາຫານໂຮງຮຽນຟຣີໂດຍອັດຕະໂນມັດໂລດແລະຕ້ອງໄດ້ຮ້ອງຂໍເອົາຄາບອາຫານຟຣີຫລືລຸດຣາຄາໂດຍການຕິດຕໍ່ຫາໂຮງຮຽນຂອງລູກຂອງເຂົາເຈົ້າ.

### 10. ລູກຂອງຂ້ອຍເຂົ້າໂຮງຮຽນຢູ່ເຮືອນ.ເຂົາເຈົ້າມີສິດໄດ້ຮັບ P-EBT ບໍ່?

ບໍ່. P-EBT ມີໄວ້ໃຫ້ແກ່ເດັກນ້ອຍຜູ້ທີ່ໄດ້ຈົດຊື່ເຂົ້າແລະກຳລັງໄດ້ຮັບການສຶກສາຢູ່ໃນໂຮງຮຽນ,ແລະຈະໄດ້ຮັບຕາມປົກກະຕິຄາບອາຫານຢູ່ໂຮງຮຽນຟຣີຫລືລຸດຣາຄາຜ່ານໂຄງການ NSLP ຫລື SBP ຖ້າຫາກວ່າໂຮງຮຽນບໍ່ໄດ້ປິດຫລືມີການເຂົ້າໂຮງຮຽນລຸດເວລາລົງ.

### 11. ຂ້ອຍຈະຮູ້ຈັກໄດ້ແນວໃດວ່າລູກຂອງຂ້ອຍມີເງື່ອນໄຂໄດ້ຮັບ ການຊ່ວຍເຫລືອ P-EBT ຫລືບໍ່?

ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຈະໄດ້ຮັບໃບແຈ້ງການແລະບັດ P-EBT ທີ່ມີຊື່ຂອງເຂົາເຈົ້າເອງຢູ່ໃນບັດ.ພວກເຮົາຄາດວ່າໃບແຈ້ງການຈະຖືກສົ່ງອອກໄປຫາເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບເລີ້ມຕົ້ນໃນທ້າຍຂອງເດືອນມາກ໌.ບັດ P-EBT ຈະຖືກສົ່ງອອກໄປບໍ່ພໍເທົ່າໃດຫລັງຈາກນັ້ນ.ຄອບຄົວຄວນຈະເກັບຮັກສາບັດຂອງເຂົາເຈົ້າໄວ້ຍ້ອນວ່າການຊ່ວຍເຫລືອເພີ້ມເຕີມອີກອາດຈະຖືກຕື່ມເຂົ້າໃສ່ນຳຫລັງຖ້າຫາກວ່າໂຮງຮຽນຂອງເຂົາເຈົ້າດຳເນີນທີ່ຈະຖືກປິດຢູ່ຕໍ່ໄປຫລືມູຊົ່ວໂມງລຸດລົງ.

### 12. ເປັນຫຍັງມັນຈຶ່ງໃຊ້ເວລາດົນນານແທ້ເພື່ອຈະໄດ້ຮັບບັດ P-EBT?

ກົມກະສິກັມຂອງ U.S. ໄດ້ແນະນຳໃຫ້ຣັດທີ່ຈະທຳການເບີກການຊ່ວຍເຫລືອອອກໃຫ້ເປັນຊຸດໄປເພື່ອຈະຫລີກເວັ້ນບັນຫາເຣື່ອງການບັນຈຸແລະຄວາມຕ້ອງການຢູ່ຕາມຮ້ານຄ້າຂາຍອາຫານທ້ອງຖິ່ນ.

## ການໄດ້ຮັບການຊ່ວຍເຫລືອ P-EBT

### 13. ຂ້ອຍຈະໄດ້ຮັບການຊ່ວຍເຫລືອ P-EBT ຂ້ອຍໄດ້ແນວໃດ ສຳລັບປີໂຮງຮຽນ 2020-21?

ຄອບຄົວທີ່ມີເງື່ອນໄຂໄດ້ຮັບບໍ່ຕ້ອງໄດ້ຮ້ອງຂໍເອົາເພື່ອຈະໄດ້ຮັບການຊ່ວຍເຫລືອ P-EBT ສຳລັບປີໂຮງຮຽນປີນີ້.ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບແຕ່ລະຄົນຈະໄດ້ຮັບບັດ P-EBT ທີ່ຖືກສົ່ງໂດຍກົງໄປຫາຄອບຄົວໂດຍບໍ່ຕ້ອງໄດ້ຮ້ອງຂໍເອົາທາງອອນລາຍນ໌.ເບິ່ງໃສ່ຄຳຖາມ 6 ເພື່ອລາຍຣະອຽດເພີ້ມເຕີມກ່ຽວກັບຄອບຄົວທີ່ມີເງື່ອນໄຂໄດ້ຮັບ.

### 14. ບັດ P-EBT ໃບໃຫມ່ຈະຖືກສົ່ງໄປຫາທີ່ຢູ່ບ່ອນໃດ?

ບັດ P-EBT ຈະຖືກສົ່ງໄປຫາທີ່ຢູ່ໃນສຳນວນເອກສານນຳໂຮງ ຮຽນ.ຕິດຕໍ່ໄປຫາໂຮງຮຽນຂອງທ່ານເພື່ອຈະໃຫ້ແນ່ໃຈວ່າເຂົາ ເຈົ້າມີທີ່ຢູ່ໄປສະນີປັດຈຸບັນຂອງທ່ານ.

ຄອບຄົວທີ່ຍື່ນຄຳຮ້ອງຂໍເອົາຄາບອາຫານໂຮງຮຽນທີ່ມີທີ່ຢູ່ປັດຈຸບັນຄວນຈະດັດແປງທີ່ຢູ່ໃຫມ່ອີກຄືກັນນຳໂຮງຮຽນ.ຣະບົບຄາບອາຫານຂອງໂຮງຮຽນແລະຣະບົບລາຍຂອງຣະອຽດຂອງນັກຮຽນອາດຈະບໍ່ ແມ່ນແນວດຽວກັນ.

## ການໄດ້ຮັບການຊ່ວຍເຫລືອ **P-EBT** (ຕໍ່)

### 15. ການຊ່ວຍເຫລືອຂອງຂ້ອຍຈະຖືກໃສ່ວັນທີຢ້ອນຫລັງຄືນໄປຫາ ວັນທີເລີ້ມຕົ້ນຂອງປີໂຮງຮຽນບໍ່?

ແມ່ນ.ຖ້າຫາກວ່າເດັກນ້ອຍໄດ້ຖືກພົບວ່າມີເງື່ອນໄຂໄດ້ຮັບ,ພວກເຮົາຈະເບີກການຊ່ວຍເຫລືອ P-EBT ອອກໃຫ້ຢ້ອນຄືນໄປຫາເລີ້ມຕົ້ນຂອງປີໂຮງຮຽນ 2020-21 ຫລືເດືອນທີ່ໂຮງຮຽນກາຍເປັນມີເງື່ອນໄຂໄດ້ຮັບແລະໄປເຖິງເດືອນແຈນຢູຣີ 2021. ການຊ່ວຍເຫລືອສຳລັບເດືອນເຫລົ່ານີ້ຈະຖືກເບີກອອກໃຫ້ໃນເດືອນມາກຊ໌ 2021; ເຖິງຢ່າງໃດກໍຕາມ,ຄອບຄົວຈະບໍ່ໄດ້ຮັບບັດຂອງເຂົາເຈົ້າຈົນກວ່າທ້າຍຂອງເດືອນເອໂປຣ.ຈຳນວນຈະແຕກຕ່າງກັນໄປສຳລັບເດັກນ້ອຍແຕ່ລະຄົນໂດຍອີງຕາມແບບວິທີການຮ່ຳຮຽນຂອງໂຮງຮຽນຂອງເຂົາເຈົ້າ.ການຊ່ວຍເຫລືອສຳລັບເດືອນເຟບຣູຣີໄປຮອດທ້າຍປີໂຮງຮຽນຈະຖືກເບີກອອກໃຫ້ທຸກໆສອງເດືອນ.

### 16. ຂ້ອຍຕ້ອງໄດ້ເຮັດຫຍັງແດ່ເມື່ອເວລາບັດ **P-EBT** ໃບໃຫມ່ມາ ຮອດໃນທາງໄປສະນີ?

ປະຕິບັດຕາມຄຳແນະນຳທີ່ມານຳບັດ P-EBT ຂອງທ່ານແລະແຕ່ງຕັ້ງເລກປະຈຳຕົວທີ່ປອດພັຍຂອງທ່ານຫລືເລກ PIN. ເກັບຮັກສາບັດຂອງທ່ານໄວ້!ຖ້າຫາກວ່າໂຮງຮຽນຂອງທ່ານຍັງຢູ່ໃນສະພາບການຮຽນຮູ້ຢູ່ເຮືອນຢູ່,ມີມື້ເຂົ້າໂຮງຮຽນລຸດລົງຫລືຖືກປິດຍ້ອນໂຣກ COVID-19, ພວກເຮົາຈະຕື່ມການຊ່ວຍເຫລືອເພີ້ມເຕີມໃຫ້ອີກໃສ່ບັດຂອງທ່ານ.

### 17. ຂ້ອຍຄວນຈະເກັບຮັກສາບັດ **P-EBT** ຂອງຂ້ອຍໄວ້ບໍ່?

ແມ່ນ.ການຊ່ວຍເຫລືອເພີ້ມເຕີມອາດຈະຖືກເຮັດອອກໃຫ້ໄດ້ໃນພາຍຫລັງໃນປີ.ບັດຕ້ອງຖືກເກັບຮັກສາໄວ້ໃນບ່ອນທີ່ປອດພັຍ.

### 18. ຖ້າຫາກວ່າຂ້ອຍຕ້ອງການບັດ **P-EBT** ໃບໃຫມ່ແທນເດ ຍ້ອນວ່າຂ້ອຍໄດ້ເຮັດບັດເສັຽຫລືບັດມີຄວາມເສັຽຫາຍ?

ບັດ P-EBT ເຮັດແທນໃບໃຫມ່ຈະຖືກເຮັດອອກມາໂດຍການໂທຫາພໍ່ຄ້າ EBT , FIS, ໄດ້ທີ່ເລກ 888-328-9271. ຄອບຄົວຈະແວ່ຢ້ຽມໄດ້ອີກຄືກັນທີ່ www.ebtEdge.com ຫລືແອບ໌ ebtEdge ຖ້າຫາກວ່າບັດເຮັດແທນໃບໃຫມ່ແມ່ນຕ້ອງການ.ເພື່ອຈະຮ້ອງຂໍເອົາບັດ P-EBT ເຮັດແທນໃບໃຫມ່,ທ່ານຈະຕ້ອງການລາຍລະອຽດຕໍ່ລົງໄປນີ້:ຊື່ເຕັມຂອງເດັກນ້ອຍ,ວັນເກີດ,ລະຫັດເຂດແລະທີ່ຢູ່ເຕັມຕາມທີ່ໂຮງຮຽນໄດ້ເອົາໃຫ້.

ທີ່ຢູ່ໄປສະນີຕ້ອງກົງກັນກັບທີ່ຢູ່ຢູ່ໃນລະບົບເພື່ອວ່າບັດເຮັດແທນໃບໃຫມ່ຈະຖືກສົ່ງອອກໄປ.ກະຣຸນາຄາດຫມາຍວ່າຈະໃຊ້ເວລາເຈັດຫາ 10 ວັນເພື່ອຈະໄດ້ຮັບບັດຂອງທ່ານ.

*ເບິ່ງຄຳຖາມ 20 ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບວ່າເມື່ອເວລາທີ່ຢູ່ຂອງທ່ານບໍ່ກົງກັນກັບທີ່ຢູ່ທີ່ພໍ່ຄ້າ EBT, FIS, ມີຢູ່ໃນ ສຳນວນຂອງເຂົາເຈົ້າ.*

### 19. ຂ້ອຍສາມາດເອົາການຊ່ວຍເຫລືອເຫລົ່ານີ້ໃສ່ໃນບັດອາຫານ **EBT** ທີ່ມີຢູ່ແລ້ວຂອງຂ້ອຍໄດ້ບໍ່?

ບໍ່ໄດ້.ໂຄງການ P-EBT ແມ່ນພິເສດສະເພາະແລະການຊ່ວຍເຫລືອແມ່ນຕ່າງຫາກຈາກການຊ່ວຍເຫລືອອາຫານຫລືເງິນສົດແນວອື່ນທີ່ມີໄວ້ໃຫ້ຢູ່ໃນບັດ Quest EBT ຂອງທ່ານ.

### 20. ລູກຂອງຂ້ອຍບໍ່ໄດ້ຮັບໃບແຈ້ງການຫລືບັດ **P-EBT.** ຂ້ອຍຄວນ ຈະເຮັດແນວໃດ?

ຖ້າຫາກວ່າທ່ານບໍ່ໄດ້ຮັບບັດຂອງທ່ານກ່ອນເດືອນເມ 2021, ໂທຫາສູນກາງຕິດຕໍ່ຫາຂອງ P-EBT ໄດ້ທີ່ເລກ 833-518-0282.

### 21. ພວກເຮົາບໍ່ຕ້ອງການການຊ່ວຍເຫລືອອັນນີ້.ຂ້ອຍສາມາດ ປະຕິເສດມັນໄດ້ບໍ່?

ພວກເຮົາແນະນຳໃຫ້ຄອບຄົວທີ່ຖືກພົບເຫັນວ່າມີເງື່ອນໄຂໄດ້ຮັບ P-EBT ທີ່ຈະໃຊ້ການຊ່ວຍເຫລືອສຳລັບຄອບຄົວຂອງເຂົາເຈົ້າແລະເພື່ອຊ່ວຍເຫລືອຊຸກຍູ້ເສດຖະກິດທ້ອງຖິ່ນ. ການຊ່ວຍເຫລືອແມ່ນໂອນຕໍ່ໃຫ້ບໍ່ໄດ້ແລະບໍ່ສາມາດໃຫ້ເປັນຂອງຂວັນຫລືບໍລິຈາກໃຫ້.ຖ້າຫາກວ່າທ່ານຍັງປະສົງທີ່ຈະປະຕິເສດການຊ່ວຍເຫລືອ,ທ່ານຈະທຳລາຍບັດຫລືສົ່ງບັດຄືນໄປຫາທີ່ຢູ່ທາງດ້ານຫລັງຂອງບັດໄດ້.ການຊ່ວຍເຫລືອຈະຖືກຖອນອອກໂດຍອັດຕະໂນມັດໂລດຫລັງຈາກ 274 ວັນຂອງການບໍ່ໃຊ້ການຊ່ວຍເຫລືອ.



## ຈຳນວນການຊ່ວຍເຫລືອ P-EBT

### 22. ຂ້ອຍຈະໄດ້ຮັບການຊ່ວຍເຫລືອ P-EBT ເທົ່າໃດ?

ຄາບອາຫານໄດ້ຖືກຄິດໄລ່ໃນອັດຕຣາປະຈຳວັນ $6.82, ຊຶ່ງຈະຄຸ້ມຄ່າຄາບເຊົ້າທ່ຽງ,ຄາບເຊົ້າເຊົ້າແລະເຄື່ອງກິນຫລິ້ນ,ຄູນໃຫ້ຈຳນວນສະເລັ່ຽຂອງວັນດຳເນີນກິຈການ 18 ວັນຕໍ່ເດືອນສຳລັບປີໂຮງຮຽນ 2020-21.

ຈຳນວນການຊ່ວຍເຫລືອ P-EBT ໄດ້ຖືກອີງໃສ່ສະພາບການຮຽນ ຮູ້ຂອງນັກຮຽນແຕ່ລະຄົນແລະສາມາດແຕກຕ່າງກັນໄປຈາກນັກ ຮຽນແຕ່ລະຄົນ,ແມ້ແຕ່ຢູ່ພາຍໃນຄອບຄົວດຽວກັນ.

ໂຮງຮຽນຈະລາຍງານແບບວິທີການຮ່ຳຮຽນຂອງເຂົາເຈົ້າສຳລັບນັກຮຽນສ່ວນໃຫຍ່ສຳລັບສ່ວນໃຫຍ່ຂອງແຕ່ລະເດືອນ.ແຕ່ລະໂຮງຮຽນແມ່ນໂດຍສະເພາະແລະໄດ້ດັດແປງແບບວິທີການຮຽນຮ່ຳຮຽນຂອງເຂົາເຈົ້າຫລາຍໆເທື່ອຕັ້ງແຕ່ເດືອນເຊັບເທັມເບີ 2020. ຍ້ອນສາເຫດອັນນີ້,ເດັກນ້ອຍແຕ່ລະຄົນຈະໄດ້ຮັບຈຳນວນການຊ່ວຍເຫລືອຕ່າງກັນ.ຕາຕະລາງຂ້າງລຸ່ມນີ້ຈະບອກຣະດັບຂອງການຊ່ວຍເຫລືອແຕກຕ່າງກັນອີງຕາມແບບວິທີຂອງການຮ່ຳຮຽນ.

| ແບບວິທີຂອງການຮ່ຳຮຽນ | ການຄິດໄລ່ | ຈຳນວນເງິນດອນລາຕໍ່ເດືອນ |
|---|---|---|
| ການຮ່ຳຮຽນທາງໄກເຕັມເວລາ | $6.82 x 18 x 100% | $123 |
| ໂດຍຕົນເອງນຶ່ງວັນ | $6.82 x 18 x 80% | $99 |
| ໂດຍຕົນເອງສອງວັນ | $6.82 x 18 x 60% | $74 |
| ໂດຍຕົນເອງສາມວັນ | $6.82 x 18 x 40% | $50 |
| ໂດຍຕົນເອງສີ່ວັນ | $6.82 x 18 x 20% | $25 |

### 23. ເປັນຫຍັງຈຳນວນເງິນຈຶ່ງບໍ່ຖືກອີງໃສ່ການມາເຂົ້າໂຮງຮຽນຕົວຈິງຂອງລູກຂອງຂ້ອຍ?

ເພື່ອຈະຊ່ວຍເຫລືອເດັກນ້ອຍສ່ວນຫລາຍ,ພວກເຮົາໄດ້ໃຊ້ຈຳນວນມາດຕະຖານທົ່ວຣັດຊຶ່ງໄດ້ຖືກມອບໃຫ້ເດັກນ້ອຍ.ພວກເຮົາບໍ່ສາມາດທີ່ຈະກຳກັບເບິ່ງນຳການມາເຂົ້າໂຮງຮຽນຂອງນັກຮຽນສ່ວນບຸກຄົນ.ພວກເຮົາໃຊ້ແບບຮ່າງການຮຽນຮູ້ສ່ວນໃຫຍ່ຢູ່ໂຮງຮຽນຂອງເດັກນ້ອຍຕາມທີ່ຖືກລາຍງານມາໂດຍໂຮງຮຽນ.

### 24. ຈຳນວນຂອງການຊ່ວຍເຫລືອ P-EBT ສາມາດຖືກປ່ຽນ ຫລືດັດແປງໄດ້ບໍ່?

ຈຳນວນຂອງ P-EBT ຈະຖືກອີງຕາມສິ່ງທີ່ໂຮງຮຽນໄດ້ລາຍງານມາວ່າເປັນແບບຮ່າງຂອງການຮຽນຮູ້ຕົ້ນຕໍສຳລັບຫມົດໂຮງຮຽນສຳລັບແຕ່ລະເດືອນ. ຖ້າຫາກວ່າທ່ານເຊື່ອວ່າມັນມີຄວາມຜິດພາດຢູ່ໃນຈຳນວນຂອງ P-EBT ຂອງລູກຂອງທ່ານ,ທ່ານສາມາດໂທຫາສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ເລກ 833-518-0282 ເພື່ອຈະຮ້ອງຂໍໃຫ້ເຂົາເຈົ້າກວດເບິ່ງເງື່ອນໄຂຮັບເອົາຂອງທ່ານຄືນ.

### 25. ມັນຈະມີການຊ່ວຍເຫລືອ P-EBT ຕື່ມອີກບໍ່?

ການຊ່ວຍເຫລືອສຳລັບເດືອນເຟບຣູຣີໄປຮອດທ້າຍປີເຂົ້າໂຮງຮຽນຈະຖືກເບີກອອກໃຫ້ທຸກໆສອງເດືອນຖ້າຫາກວ່າໂຮງຮຽນຂອງທ່ານດຳເນີນຕໍ່ໄປທີ່ຈະມີການຮ່ຳຮຽນໂດຍຕົນເອງທີ່ຖືກຈຳກັດ.ການຊ່ວຍເຫລືອ Pandemic EBT ສຳລັບປີໂຮງຮຽນປີຕໍ່ໄປແມ່ນບໍ່ທັນຮູ້ຈັກເທື່ອ.ໃຫ້ແນ່ໃຈວ່າຈະເກັບຮັກສາບັດຂອງທ່ານໄວ້ສຳລັບການຊ່ວຍເຫລືອໃນຂ້າງຫນ້າທີ່ອາດຈະເປັນໄປໄດ້.ກະຣຸນາແວ່ເຂົ້າປັຽມ www.dshs.wa.gov/pebt ເພື່ອຣາຍຣະອຽດເພີ້ມເຕີມ.

## ສູນກາງຕິດຕໍ່ຫາຂອງ P-EBT

### 26. ຂ້ອຍຈະໂທຫາໃຜສຳລັບຄຳຖາມກ່ຽວກັບ P-EBT?

ຄຳຖາມກ່ຽວກັບເງື່ອນໄຂຮັບເອົາຂອງ P-EBT ທຸກໆຢ່າງຈະຖືກສະເນີໃຫ້ສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ເລກ 833-518-0282.

### 27. ຂ້ອຍຈະໂທຫາໃຜເພື່ອຈະແຕ່ງຕັ້ງ PIN ຂອງຂ້ອຍ?

ເມື່ອທ່ານໄດ້ຮັບບັດຂອງທ່ານແລ້ວ,ຄອບຄົວຈະໂທຫາເລກ 888-328-9271 ເພື່ອຈະແຕ່ງຕັ້ງເລກ PIN ຂອງທ່ານ.

### 28. ຂ້ອຍຈະຕິດຕໍ່ຫາໃຜຖ້າຫາກວ່າຂ້ອຍບໍ່ໄດ້ຮັບບັດ P-EBT ຂອງຂ້ອຍຍ້ອນການປ່ຽນແປງຂອງທີ່ຢູ່?

ຄອບຄົວຄວນຈະໂທຫາສູນກາງຕິດຕໍ່ຫາຂອງ P-EBT ໄດ້ທີ່ເລກ 833-518-0282 ເພື່ອຄວາມຊ່ວຍເຫລືອນຳການປ່ຽນແປງທີ່ຢູ່.

## ການໃຊ້ການຊ່ວຍເຫລືອ P-EBT

### 29. ຂ້ອຍຈະສາມາດໃຊ້ບັດການຊ່ວຍເຫລືອ P-EBT ຂອງ ຂ້ອຍ ໄດ້ຢູ່ໃສແລະຂ້ອຍສາມາດຈະຊື້ເອົາຫຍັງໄດ້ແດ່?

ໃຊ້ບັດ P-EBT ຂອງທ່ານຄືກັນກັບບັດເດບິດຄາດ.ການຊ່ວຍເຫລືອຂອງ P-EBT ຂອງທ່ານສາມາດຊື້ເອົາອາຫານໄດ້ຢູ່ຕາມຮ້ານຂາຍອາຫານແລະຕະລາດຊາວນາສ່ວນຫລາຍ.ທ່ານສາມາດໃຊ້ການຊ່ວຍເຫລືອ P-EBT ຂອງທ່ານໄດ້ຢູ່ຕາມຮ້ານຄ້າທຸກໆບ່ອນທີ່ຮັບເອົາບັດ EBT, ລວມທັງອອນລາຍນ໌ຈາກ Amazon ແລະ Walmart. ຮ້ານຄ້າຍ່ອຍສ່ວນຫລາຍມີປ້າຍບອກວ່າເຂົາເຈົ້າຮັບເອົາບັດ EBT.

ການຊ່ວຍເຫລືອ P-EBT ສາມາດຖືກໃຊ້ເພື່ອຈະຊື້ເອົາອາຫານທຸກໆຢ່າງທີ່ສາມາດຖືກຊື້ເອົາໄດ້ດ້ວຍ SNAP EBT. ອາຫານທີ່ມີເງື່ອນໄຂໄດ້ຮັບຂອງ EBT ແມ່ນອາຫານສ່ວນຫລາຍ,ຍົກເວັ້ນຖືກແຕ່ງກິນແລະອາຫານຂາຍຮ້ອນໆ.ທ່ານສາມາດຮູ້ຈັກເພີ້ມເຕີມກ່ຽວກັບອາຫານທີ່ມີເງື່ອນໄຂໄດ້ຮັບຂອງ EBT ໂດຍການແວ່ປ້ຽມ What can SNAP Buy?

### 30. P-EBT ສາມາດຖືກໃຊ້ສຳລັບ SNAP Market Match ບໍ່?

ແມ່ນ.ຄອບຄົວສາມາດໃຊ້ P-EBT ຂອງເຂົາເຈົ້າເພື່ອຈະໄດ້ SNAP Market Match. ໂຄງການອັນນີ້ອະນຸຍາດຄອບຄົວໃຫ້ໄດ້ຈຳນວນອາຫານສອງເທົ່າຢູ່ຕາມຕະລາດຊາວນາທີ່ເຂົ້າຮ່ວມນຳ!ຮຽນຮູ້ເພີ້ມເຕີມໄດ້ທີ່ DOH SNAP Market Match.

### 31. ຂ້ອຍຕ້ອງໄດ້ໃຊ້ການຊ່ວຍເຫລືອ P-EBT ຂອງຂ້ອຍທັງຫມົດ ບໍ່ເມື່ອເວລາຂ້ອຍໄດ້ຮັບມັນ?

ບໍ່.ການຊ່ວຍເຫລືອຈະຍັງເຫລືອຢູ່ຕໍ່ໄປເດືອນຕໍ່ເດືອນ.ການຊ່ວຍເຫລືອ P-EBT ຂອງທ່ານຈະຍັງເຫລືອຢູ່ໃນບັດຂອງທ່ານເປັນເວລາສູງສຸດ 274 ວັນຈາກກິຈກັມເທື່ອສຸດທ້າຍຂອງທ່ານເລີ້ມຕົ້ນຕັ້ງແຕ່ວັນທີເບີກອອກໃຫ້.

ຢ່າສູ່ຖິ້ມບັດ P-EBT ຂອງທ່ານໄປ.ຕາບໃດທີ່ເຫດການສຸຂະພາບສາທາຣະນະສຸກເສີນ COVID-19 ຍັງຖືກວາງໃຊ້ຢູ່,ພວກເຮົາຈະເບີກການຊ່ວຍເຫລືອ P-EBT ເພີ້ມເຕີມໃສ່ບັດໃບນີ້.

### 32. ຂ້ອຍຕ້ອງໄດ້ແຕ່ງຕັ້ງເລກ PIN ຂອງຂ້ອຍໃສ່ບັດ P-EBT ຂອງຂ້ອຍກ່ອນວັນທີເຈາະຈົງບໍ່?

ບໍ່.ເຖິງຢ່າງໃດກໍຕາມ,ພວກເຮົາຂໍຊັກຊວນໃຫ້ຄອບຄົວທຸກໆຄົນທີ່ຈະແຕ່ງຕັ້ງເລກ P-EBT ຂອງເຂົາເຈົ້າໂດຍໄວເທົ່າທີ່ຈະໄວໄດ້ເມື່ອເຂົາເຈົ້າໄດ້ຮັບບັດແລ້ວ,ແຕ່ວ່າບໍ່ມີວັນຕາຍໂຕຖືກຕັ້ງໄວ້ທີ່ຈະແຕ່ງຕັ້ງເລກ PIN ຫລືເຮັດໃຫ້ບັດ P-EBT ໃຫ້ໃຊ້ການໄດ້.

### 33. ຂ້ອຍກວດເບິ່ງເງິນຍັງເຫລືອຢູ່ຂອງຂ້ອຍໄດ້ແນວໃດ?

ທ່ານສາມາດໂທຫາພໍ່ຄ້າ EBT , FIS, ໄດ້ທີ່ເລກ 888-328-9271 (ເລກຢູ່ດ້ານຫລັງຂອງບັດ P-EBT) ເພື່ອຈະກວດເບິ່ງເງິນຍັງເຫລືອຢູ່,ຫລືໄປທີ່ www.ebtEdge.com ຫລືດາວນ໌ໂຫລດແອບປິເກລເຊິນ ebtEDGE ໃສ່ໂທຣະສັບມືຖືຂອງທ່ານ.

### 34. ຄົນໃດຄົນນຶ່ງໄດ້ໃຊ້ການຊ່ວຍເຫລືອຂອງຂ້ອຍ.ຂ້ອຍສາ ມາດ ໃຫ້ ມັນຖືກເຮັດແທນຄືນໃຫ້ໄດ້ບໍ່?

ບໍ່ໄດ້. ພວກເຮົາບໍ່ສາມາດເຮັດແທນຄືນມູນຄ່າຂອງການຊ່ວຍ ເຫລືອຕ່າງໆທີ່ໄດ້ຖືກແລກປ່ຽນເອົາແລ້ວ.ມັນສຳຄັນຫລາຍທີ່ ສຸດທີ່ທ່ານຈະເລືອກເອົາເລກ PIN ທີ່ປອດພັຍເພື່ອຈະຈື່ໄວ້ແຕ່ ວ່າບໍ່ໄດ້ຖືກໃຊ້ໂດຍທົ່ວໄປ.

ພວກເຮົາຂໍແນະນຳໃຫ້ທ່ານຕິດຕໍ່ຫາພໍ່ຄ້າ EBT, FIS, ໄດ້ທີ່ເລກ 888-328-9271 ເພື່ອຈະຍົກເລີກບັດຂອງທ່ານແລະຮ້ອງຂໍເອົາໃບໃຫມ່.ຖ້າຫາກວ່າທ່ານສົງສັຍມີການສໍ້ໂກງ,ໂທຫາສາຍ Washington State Welfare Fraud Hotline ໄດ້ທີ່ເລກ 800-562-6906.

## ລາຍລະອຽດ P-EBT ແນວອື່ນ

### 35. ຂ້ອຍກຳລັງປະເຊີນຫນ້ານຳການບໍ່ມີເຮືອນຢູ່. ຂ້ອຍຈະໄດ້ບັດ P-EBT ຂອງຂ້ອຍໄດ້ແນວໃດ?

ຖ້າຫາກວ່າຄອບຄົວຂອງທ່ານກຳລັງປະເຊີນຫນ້ານຳການບໍ່ມີເຮືອນຢູ່ແລະລູກຂອງທ່ານມີເງື່ອນໄຂໄດ້ຮັບ P-EBT, ທ່ານສາມາດຮ້ອງຂໍເອົາບັດ P-EBT ຂອງທ່ານຖືກສົ່ງໄປຫາທີ່ຢູ່ຕ່າງທີ່ທ່ານສາມາດເຂົ້າເຖິງໄດ້ (ຕົວຢ່າງ,ໂຮງຮຽນຂອງລູກຂອງທ່ານ) .ໂທຫາໂຮງຮຽນຂອງທ່ານເພື່ອຈະທຳການຈັດແຈງທີ່ຈຳເປັນສຳລັບການມາເອົາບັດ P-EBT.

### 36. ການຊ່ວຍເຫລືອ P-EBT ບໍ່ຄຸ້ມກັນຄ່າໃຊ້ຈ່າຍຂອງຂ້ອຍຫມົດທຸກຢ່າງ;ຂ້ອຍຕ້ອງການຄວາມຊ່ວຍເຫລືອເພີ້ມເຕີມ.

#### ຂ້ອຍຈະຕິດຕໍ່ຫາໃຜ?

ຖ້າຫາກວ່າທ່ານຕ້ອງການການຊ່ວຍເຫລືອອາຫານຫລືການຊ່ວຍເຫລືອເງິນສົດເພີ້ມເຕີມອີກ.ທ່ານສາມາດໂທຫາກົມສັງຄົມສົງເຄາະແລະສາທາຣະນະສຸກເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອໄດ້ທີ່ເລກ 877-501-2233 ຫລືແວ່ເຂົ້າປ້ຽມ www.washingtonconnection.org.

ທ່ານຍັງຈະໂທຫາ Washington Information Network ໄດ້ອີກຄືກັນ,ຫລື ຮື່211, ໄດ້ທີ່ເລກ 877-211-9274 ເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບແຫລ່ງຊ່ວຍເຫລືອອື່ນໆທີ່ມີໄວ້ໃຫ້ຢູ່ໃນຊຸມນຸມຊົນຂອງທ່ານ.

### 37. ມີການຊ່ວຍເຫລືອອາຫານອື່ນໆແນວໃດໄວ້ໃຫ້ ບໍ່ໃນເວລາ ດຽວນີ້?

- ປຸ່ມ meal finder tool ບ່ອນນີ້ສາມາດຊ່ວຍເຫລືອຄອບຄົວໃຫ້ຊອກຫາສະຖານທີ່ບ່ອນທີ່ເສີບຄາບອາຫານໃຫ້ເດັກນ້ອຍ.ການເຂົ້າຮ່ວມນຳໃນການບໍຣິການຄາບອາຫານອັນນີ້ບໍ່ໄດ້ກີດກັ້ນເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຈາກການໄດ້ຮັບການຊ່ວຍເຫລືອ P-EBT. ຕິດຕໍ່ຫາຫມວດໂຮງຮຽນທ້ອງຖິ່ນຂອງທ່ານເພື່ອຈະຮູ້ຈັກກ່ຽວກັບສະຖານທີ່ບໍຣິການຄາບອາຫານຟຣີຢູ່ໃນໂຊງເຂດຂອງທ່ານ.ໂຄງການຄາບອາຫານເຫລົ່ານີ້ແມ່ນມີໄວ້ໃຫ້ແກ່ເດັກນ້ອຍທຸກໆຄົນທີ່ມີອາຍຸ 18 ປີແລະຕ່ຳກວ່າ,ບໍ່ກ່ຽວວ່າເຂົາເຈົ້າຈະໄປເຂົ້າໂຮງຮຽນຢູ່ບ່ອນໃດ.
- ທ່ານສາມາດໄປທີ່ www.washingtonconnection.org ເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອອາຫານຈຳເປັນ.
- ຖ້າຫາກວ່າທ່ານມີລູກນ້ອຍ,ທ່ານຍັງຈະມີສິດໄດ້ຮັບໂຄງການຊ່ວຍເຫລືອຜູ້ຍິງ,ເດັກທາຣົກແລະເດັກນ້ອຍຫລືໂຄງການ WIC, ຊຶ່ງຈະໃຫ້ການຊ່ວຍເຫລືອອາຫານໃຫ້ແກ່ເດັກນ້ອຍຮອດອາຍຸ 5 ປີແລະແມ່ຜູ້ກຳລັງຖືພາແລະລ້ຽງລູກດ້ວຍນ້ຳນົມແມ່.ຊອກຫາຣາຍລະອຽດເພີ້ມເຕີມໄດ້ທີ່ https://www.doh.wa.gov/YouandYourFamily/WIC. ຖ້າຫາກວ່າທ່ານສົງສັຍມີການສໍ້ໂກງ,ໂທຫາສາຍ Washington State Welfare Fraud Hotline ໄດ້ທີ່ເລກ 800-562-6906.